ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ: 168/ນຍ
ນະຄອນຫຼວງວຽງຈັນ, ວັນທີ 14 / 03 / 25

# ດຳລັດ
# ວ່າດ້ວຍ ສິດ ແລະ ໜ້າທີ່ ຂອງກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ໃນການຈັດຕັ້ງປະຕິບັດວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ (ສະບັບປັບປຸງ) ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 01 ກໍລະກົດ 2024;
- ອີງຕາມ ໜັງສືສະເໜີ ຂອງຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 20/ຄຕຟງ, ລົງວັນທີ 22 ພະຈິກ 2024;
- ອີງຕາມ ໜັງສືສະເໜີ ຂອງກະຊວງພາຍໃນ ສະບັບເລກທີ 04/ພນ, ລົງວັນທີ 09 ມັງກອນ 2025.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ວາງອອກ ເພື່ອຜັນຂະຫຍາຍກົດໝາຍວ່າດ້ວຍການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແນໃສ່ເຮັດໃຫ້ການເຄື່ອນໄຫວວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ໃຫ້ມີຄວາມຈະແຈ້ງ ແລະ ເປັນເອກະພາບ.

### ມາດຕາ 2 ສິດ ແລະ ໜ້າທີ່ ຂອງກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ

ສິດ ແລະ ໜ້າທີ່ ຂອງກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ແມ່ນຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດບັນດາມາດຕະການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ຕາມທີ່ໄດ້ກຳນົດໄວ້ໃນກົດ ໝາຍວ່າດ້ວຍການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ດຳລັດສະບັບນີ້ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ.

ວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂຽນຫຍໍ້ວ່າ "ວຽກງານ ຕຟງ ແລະ ຕສຮ".

## ໝວດທີ 2
## ສິດ ແລະ ໜ້າທີ່ ຂອງກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ໃນການຈັດຕັ້ງປະຕິບັດ ວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

### ມາດຕາ 3 ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ມີສິດ ແລະ ໜ້າທີ່ໃນ ການຈັດຕັ້ງປະຕິບັດວຽກງານ ຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ມີສິດ ແລະ ໜ້າທີ່ ໃນການຈັດຕັ້ງປະຕິບັດວຽກງານ ຕຟງ ແລະ ຕສຮ ມີ ດັ່ງນີ້:

1. ກະຊວງການເງິນ;
2. ກະຊວງຍຸຕິທຳ;
3. ກະຊວງການຕ່າງປະເທດ;
4. ກະຊວງພາຍໃນ;
5. ກະຊວງອຸດສາຫະກຳ ແລະ ການຄ້າ;
6. ກະຊວງແຜນການ ແລະ ການລົງທຶນ;
7. ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
8. ກະຊວງໂຍທາທິການ ແລະ ຂົນສົ່ງ;
9. ກະຊວງ ເຕັກໂນໂລຊີ ແລະ ການສື່ສານ;
10. ກະຊວງພະລັງງານ ແລະ ບໍ່ແຮ່;
11. ກະຊວງກະສິກຳ ແລະ ປ່າໄມ້;
12. ກະຊວງປ້ອງກັນປະເທດ;
13. ກະຊວງປ້ອງກັນຄວາມສະຫງົບ;
14. ທະນາຄານແຫ່ງ ສປປ ລາວ;
15. ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
16. ອົງການປົກຄອງທ້ອງຖິ່ນ.

### ມາດຕາ 4 ສິດ ແລະ ໜ້າທີ່ ຂອງກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ໃນການຈັດຕັ້ງປະຕິບັດວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ມີຄວາມຮັບຜິດຊອບຈັດຕັ້ງປະຕິບັດວຽກງານ ຕຟງ ແລະ ຕສຮ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ຍຸດທະສາດ ແລະ ນິຕິກຳ ທີ່ກ່ຽວກັບວຽກງານ ຕຟງ ແລະ ຕສຮ ທີ່ຢູ່ໃນຮັບຜິດຊອບຂອງຕົນ;
2. ຄຸ້ມຄອງມະຫາພາກ ໃນວຽກງານ ຕຟງ ແລະ ຕສຮ ທີ່ຢູ່ໃນຂົງເຂດຄວາມຮັບຜິດຊອບຂອງຕົນ;
3. ຊີ້ນຳພາກສ່ວນທີ່ຢູ່ໃນການຄຸ້ມຄອງ ຂອງຕົນ ເອົາໃຈໃສ່ເຄື່ອນໄຫວຈັດຕັ້ງປະຕິບັດວຽກງານ ຕຟງ ແລະ ຕສຮ ໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ ໃຫ້ມີປະສິດທິຜົນ;
4. ຊີ້ນຳ ແລະ ຊຸກຍູ້ ຫົວໜ່ວຍທີ່ມີໜ້າທີ່ລາຍງານ, ນິຕິບຸກຄົນ ແລະ ອົງການບໍ່ຫວັງຜົນກຳໄລ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ໃນການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ຢູ່ພາຍໃຕ້ການຄຸ້ມຄອງ ຂອງຕົນໃຫ້ສອດຄ່ອງກັບນິຕິກຳທີ່ກ່ຽວຂ້ອງຢ່າງມີປະສິດທິຜົນ;
5. ກວດສອບ, ຮຽກເອົາ ທຸກຂໍ້ມູນທີ່ກ່ຽວຂ້ອງ ແລະ ຈຳເປັນ ຈາກຫົວໜ່ວຍທີ່ມີໜ້າທີ່ລາຍງານ, ນິຕິບຸກຄົນ ແລະ ອົງການບໍ່ຫວັງຜົນກຳໄລ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ເປັນຕົ້ນ ແຫຼ່ງທີ່ມາຂອງ ເງິນທຶນ, ຂາຮຸ້ນ, ຜູ້ບໍລິຫານ ແລະ ຜູ້ຮັບຜົນປະໂຫຍດທີ່ແທ້ຈິງ ກ່ອນ ແລະ ຫຼັງ ອອກໃບອະນຸຍາດດຳເນີນທຸລະກິດ ເພື່ອເກັບກຳ ແລະ ສະໜອງໃຫ້ພາກສ່ວນທີ່ກ່ຽວຂ້ອງ;

6. ສ້າງ ແລະ ຈັດຕັ້ງປະຕິບັດ ແຜນງານກ່ຽວກັບການຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດວຽກງານ ຕຟງ ແລະ ຕສຣ ຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ, ນິຕິບຸກຄົນ ແລະ ອົງການບໍ່ຫວັງຜົນກຳໄລ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ;
7. ເປັນເຈົ້າການໃນການຄົ້ນຄວ້າ ອອກນິຕິກຳ, ປະເມີນ ບໍລິຫານຄວາມສ່ຽງ, ຄຸ້ມຄອງ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດພັນທະ ຂອງຕົນ ກ່ຽວກັບວຽກງານ ຕຟງ ແລະ ຕສຣ ຕໍ່ຫົວໜ່ວຍທີ່ມີໜ້າທີ່ລາຍງານ, ນິຕິບຸກຄົນ ແລະ ອົງການບໍ່ຫວັງຜົນກຳໄລ ທີ່ຢູ່ພາຍໃຕ້ການຄຸ້ມຄອງ ຂອງຕົນ;
8. ເຜີຍແຜ່ກົດໝາຍ ແລະ ລະບຽບການທີ່ຕິດພັນກັບວຽກງານ ຕຟງ ແລະ ຕສຣ ໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງ ແລະ ຫົວໜ່ວຍທີ່ມີໜ້າທີ່ລາຍງານ, ນິຕິບຸກຄົນ ແລະ ອົງການບໍ່ຫວັງຜົນກຳໄລ ທີ່ຢູ່ພາຍໃຕ້ການຄຸ້ມຄອງ ຂອງຕົນໃນຂອບເຂດທົ່ວປະເທດ;
9. ປະເມີນ ແລະ ບໍລິຫານຄວາມສ່ຽງ, ສ້າງແຜນ, ຄຸ້ມຄອງ ແລະ ຕິດຕາມ-ກວດກາ ການຈັດຕັ້ງປະຕິບັດສິດ ແລະ ພັນທະ ຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ, ນິຕິບຸກຄົນ ແລະ ອົງການບໍ່ຫວັງຜົນກຳໄລ ກ່ຽວກັບວຽກງານ ຕຟງ ແລະ ຕສຣ ທີ່ຢູ່ພາຍໃຕ້ການຄຸ້ມຄອງ ຂອງຕົນ;
10. ເກັບກຳຂໍ້ມູນ ຜູ້ຖືຮຸ້ນ, ຂາຮຸ້ນ, ຜູ້ບໍລິຫານ, ຜູ້ຮັບຜົນປະໂຫຍດທີ່ແທ້ຈິງ ແລະ ອື່ນໆ ຂອງຫົວໜ່ວຍທີ່ມີໜ້າທີລາຍງານ, ນິຕິບຸກຄົນ ແລະ ອົງການບໍ່ຫວັງຜົນກຳໄລ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນຢ່າງໜ້ອຍສິບປີ;
11. ເກັບກຳ, ຄົ້ນຄວ້າ ແລະ ຕີລາຄາ ການຈັດຕັ້ງປະຕິບັດວຽກງານ ຕຟງ ແລະ ຕສຣ ແລ້ວລາຍງານຕໍ່ຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ລັດຖະບານ;
12. ສ້າງກົນໄກພາຍໃນ ໃນການເກັບກຳຂໍ້ມູນ, ສະຖິຕິ, ແລກປ່ຽນບົດຮຽນ ແລະ ປະສານສົມທົບຢ່າງກົມກຽວ ລະຫວ່າງຂັ້ນສູນກາງ ແລະ ທ້ອງຖິ່ນ, ລະຫວ່າງກະຊວງ ແລະ ພາກສ່ວນກ່ຽວຂ້ອງ;
13. ສ້າງກົນໄກການປະສານງານກັບຄູ່ຮ່ວມງານຕ່າງປະເທດ ໃນການແລກປ່ຽນ ຂໍ້ມູນ ແລະ ບົດຮຽນດ້ານເຕັກນິກວິຊາການ;
14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 5 ສິດ ແລະ ໜ້າທີ່ ຂອງທະນາຄານ ແຫ່ງ ສປປ ລາວ, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ**

ອົງການຈັດຕັ້ງລັດ ທີ່ອອກໃບອະນຸຍາດດຳເນີນທຸລະກິດໃຫ້ແກ່ຫົວໜ່ວຍທີ່ມີໜ້າທີ່ລາຍງານ ເປັນຜູ້ຄຸ້ມຄອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ເພື່ອຈັດຕັ້ງປະຕິບັດສິດ ແລະ ພັນທະ ດ້ານວຽກງານ ຕຟງ ແລະ ຕສຣ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ນິຕິກຳອື່ນທີ່ກ່ຽວຂ້ອງ.

1. ທະນາຄານແຫ່ງ ສປປ ລາວ ຄຸ້ມຄອງຫົວໜ່ວຍທີ່ມີໜ້າທີ່ລາຍງານເຊັ່ນ: ທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກ, ໂຮງຊວດຈຳ, ບໍລິສັດເຊົ່າສິນເຊື່ອ, ຜູ້ໃຫ້ບໍລິການຊຳລະເງິນ ແລະ ຜູ້ໃຫ້ບໍລິການ ຊື້ ຂາຍ ຊັບສິນເໝືອນຈິງ. ພ້ອມທັງຍັງມີ ສິດ ແລະ ໜ້າທີ່ ຕາມທີ່ກຳນົດໄວ້ໃນມາດຕາ 4 ຂອງດຳລັດສະບັບນີ້;

2. ກະຊວງອຸດສາຫະກຳ ແລະ ການຄ້າ ຄຸ້ມຄອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ເຊັ່ນ: ທຸລະກິດ ຊື້ ຂາຍວັດຖຸມີຄ່າ. ພ້ອມທັງຍັງມີ ສິດ ແລະ ໜ້າທີ່ ຕາມທີ່ກຳນົດໄວ້ໃນມາດຕາ 4 ຂອງດຳລັດສະບັບນີ້;

3. ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຄຸ້ມຄອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ເຊັ່ນ: ທຸລະກິດຊື້ ຂາຍ ອະສັງຫາລິມະຊັບ. ພ້ອມທັງຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ ຕາມທີ່ກຳນົດໄວ້ໃນມາດຕາ 4 ຂອງດຳລັດສະບັບນີ້.

**ມາດຕາ 6 ສິດ ແລະ ໜ້າທີ່ ຂອງກະຊວງແຜນການ ແລະ ການລົງທຶນ, ກະຊວງພາຍໃນ, ກະຊວງ ເຕັກໂນໂລຊີ ແລະ ການສື່ສານ, ກະຊວງພະລັງງານ ແລະ ບໍ່ແຮ່**

ອົງການຈັດຕັ້ງລັດ ທີ່ເຮັດໜ້າທີ່ອອກໃບອະນຸຍາດ ໃຫ້ແກ່ຫົວໜ່ວຍທຸລະກິດ ຫຼື ນິຕິບຸກຄົນ ແລະ ອົງການບໍ່ຫວັງຜົນກຳໄລ ເປັນຜູ້ຄຸ້ມຄອງມະຫາພາກ ແລະ ຕິດຕາມ-ກວດກາ ຫົວໜ່ວຍດັ່ງກ່າວໃນການຈັດຕັ້ງປະຕິບັດວຽກງານ ຕຟງ ແລະ ຕສຮ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການຕ້ານ ການຟອກເງິນ ແລະ ການສະ ໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ນິຕິກຳອື່ນທີ່ກ່ຽວຂ້ອງ.

1. ກະຊວງແຜນການ ແລະ ການລົງທຶນ ກວດສອບ, ຮຽກເອົາ ທຸກຂໍ້ມູນທີ່ກ່ຽວຂ້ອງ ແລະ ຈຳເປັນ ຈາກນັກລົງທຶນ ຫຼື ຜູ້ສະເໜີລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ກ່ອນ ແລະ ຫຼັງອອກໃບອະນຸຍາດລົງທຶນ ແລະ ວຽກອື່ນທີ່ຕິດພັນໃນຄວາມຮັບຜິດຊອບ ຂອງຕົນ. ພ້ອມທັງຍັງມີ ສິດ ແລະ ໜ້າທີ່ ຕາມຂໍ້ທີ 1, 2, 3, 5, 11, 12, 13 ແລະ 14 ທີ່ກຳນົດໄວ້ໃນມາດຕາ 4 ຂອງດຳລັດສະບັບນີ້;

2. ກະຊວງພາຍໃນ ຄຸ້ມຄອງອົງການທີ່ບໍ່ຫວັງຜົນກຳໄລ ເຊັ່ນ: ການຈັດຕັ້ງສັງຄົມພາຍໃນທີ່ເຄື່ອນໄຫວເພື່ອການກຸສົນ, ສາສະໜາ, ວັດທະນະທຳ, ການສຶກສາ, ສິ່ງແວດລ້ອມ, ສາທາລະນະສຸກ, ກິລາ-ກາຍະກຳ, ວິທະຍາສາດ, ມະນຸດສະທຳ ແລະ ສັງຄົມສົງເຄາະຕ່າງໆ ໂດຍບໍ່ຫວັງຜົນກຳໄລ ເປັນຕົ້ນ: ສະມາຄົມ, ມູນນິທິ. ພ້ອມທັງຍັງມີ ສິດ ແລະ ໜ້າທີ່ ຕາມທີ່ກຳນົດໄວ້ໃນມາດຕາ 4 ຂອງດຳລັດສະບັບນີ້;

3. ກະຊວງເຕັກໂນໂລຊີ ແລະ ການສື່ສານ ຄຸ້ມຄອງວຽກງານ ຕຟງ ແລະ ຕສຮ ໃນຂອດການອອກໃບອະນຸຍາດ ຂຸດຄົ້ນເງິນຄຣິບໂຕ. ພ້ອມທັງຍັງມີ ສິດ ແລະ ໜ້າທີ່ ຕາມຂໍ້ທີ 1, 2, 3, 5, 11, 12, 13 ແລະ 14 ທີ່ກຳນົດໄວ້ໃນມາດຕາ 4 ຂອງດຳລັດສະບັບນີ້;

4. ກະຊວງພະລັງງານ ແລະ ບໍ່ແຮ່ ຄຸ້ມຄອງນິຕິບຸກຄົນ ແລະ ບຸກຄົນ ທີ່ຮັບອະນຸຍາດການຂຸດຄົ້ນ, ການສຳຫຼວດ, ການຂຸດເຈາະ, ການຜະລິດ, ການຊື້ ຂາຍ, ການຈັດເກັບລາຍຮັບ ຈາກການຂຸດຄົ້ນບໍ່ແຮ່ ຫຼື ແຮ່ທາດທີ່ມີຄ່າ. ພ້ອມທັງຍັງມີ ສິດ ແລະ ໜ້າທີ່ ຕາມຂໍ້ທີ 1, 2, 3, 5, 11, 12, 13 ແລະ 14 ທີ່ກຳນົດໄວ້ໃນມາດຕາ 4 ຂອງດຳລັດສະບັບນີ້.

**ມາດຕາ 7 ສິດ ແລະ ໜ້າທີ່ ຂອງກະຊວງການຕ່າງປະເທດ**

ກະຊວງການຕ່າງປະເທດ ເປັນຜູ້ຄຸ້ມຄອງ ອົງການທີ່ບໍ່ຫວັງຜົນກຳໄລ ເຊັ່ນ: ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ທີ່ເຄື່ອນໄຫວເພື່ອ ການກຸສົນ, ສາສະໜາ, ວັດທະນະທຳ, ການສຶກສາ, ສິ່ງແວດລ້ອມ, ສາທາລະນະສຸກ, ກິລາ-ກາຍະກຳ, ວິທະຍາສາດ, ມະນຸດສະທຳ ແລະ ສັງຄົມສົງເຄາະຕ່າງໆ ໂດຍບໍ່ຫວັງຜົນກຳໄລ ຕາມທີ່ກຳນົດໄວ້ໃນມາດຕາ 4 ຂອງດຳລັດສະບັບນີ້. ພ້ອມທັງ ຍັງມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຕິດຕາມ ແລະ ນຳສົ່ງ ບັນດາລາຍຊື່ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຢູ່ໃນບັນຊີລາຍຊື່ ທີ່ພົວພັນກັບການກໍ່ການຮ້າຍ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ກຳນົດໂດຍສະພາຄວາມໝັ້ນຄົງ ຂອງອົງການສະຫະປະຊາຊາດ ໃຫ້ແກ່ທຸກພາກສ່ວນທີ່ກ່ຽວຂ້ອງພາຍໃນເພື່ອຕິດຕາມ, ເຝົ້າລະວັງ ແລະ ຈັດຕັ້ງປະຕິບັດ;

2. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອພິຈາລະນາ ໃນການກຳນົດລາຍຊື່ເຂົ້າ ຫຼື ລຶບອອກບັນຊີລາຍຊື່ທີ່ພົວພັນກັບຜູ້ກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງ ສປປ ລາວ ແລະ ຕ່າງປະເທດ.

**ມາດຕາ 8 ສິດ ແລະ ໜ້າທີ່ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ**

ກະຊວງໂຍທາທິການ ແລະ ຂົນສົ່ງ ຄຸ້ມຄອງນິຕິບຸກຄົນ, ບຸກຄົນ ທີ່ໃຫ້ບໍລິການຂົນສົ່ງ ປະເພດແຮ່ທາດ, ວັດຖຸເຄມີ, ຂີ້ເຫຍື່ອ, ໄມ້ທ່ອນ, ໄມ້ແປຮູບ, ສັດ ທີ່ນອນໃນບັນຊີຫວງຫ້າມ ແລະ ວັດຖຸອື່ນໆ ທີ່ເປັນມົນລະພິດຕໍ່ສິ່ງແວດລ້ອມ. ພ້ອມທັງຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ ຕາມຂໍ້ທີ 1, 2, 3, 5, 10, 11, 12, 13 ແລະ 14 ທີ່ກຳນົດໄວ້ໃນມາດຕາ 4 ຂອງດຳລັດສະບັບນີ້. ພ້ອມທັງຍັງມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສະໜອງຂໍ້ມູນເຈົ້າຂອງກຳມະສິດຕໍ່ພາຫະນະ ພາຍຫຼັງອອກໃບອະນຸຍາດດັ່ງກ່າວໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງ ແລະ ສຳນັກງານຂໍ້ມູນຕ້ານການຟອກເງິນ ຕາມການຮ້ອງຂໍ;

2. ເປັນເຈົ້າການໃນການແຈ້ງ ຫຼື ປະກາດ ໃຫ້ຜູ້ໂດຍສານ ເທິງເຮືອບິນ ທີ່ເດີນທາງເຂົ້າ-ອອກ ສປປ ລາວ ກ່ຽວກັບການແຈ້ງເງິນສົດ, ວັດຖຸມີຄ່າ ແລະ ເຄື່ອງມືທາງດ້ານການເງິນ ຕາມການແຈ້ງ ຂອງພາກສ່ວນກ່ຽວຂ້ອງເປັນແຕ່ລະໄລຍະ.

**ມາດຕາ 9 ສິດ ແລະ ໜ້າທີ່ ຂອງກະຊວງການເງິນ**

ກະຊວງການເງິນ ຄຸ້ມຄອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ເຊັ່ນ: ປະກັນໄພ, ສາທະກິດບັນຊີ, ວິສາຫະກິດກວດສອບ, ທຸລະກິດກາຊີໂນ ແລະ ອື່ນ. ພ້ອມທັງຈັດຕັ້ງປະຕິບັດຄວາມຮັບຜິດຊອບ ຕາມທີ່ກຳນົດໄວ້ໃນມາດຕາ 4 ຂອງດຳລັດສະບັບນີ້ ຍັງມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເຈົ້າການໃນການປະສານງານ, ດຳເນີນການສືບສວນ-ສອບສວນ ກະທຳຜິດຕົ້ນກ່ຽວກັບການລະເມີດພາສີ, ອາກອນ ຄຽງຄູ່ກັບການສືບສວນ-ສອບສວນທາງດ້ານການເງິນ ເພື່ອນຳໄປສູ່ການດຳເນີນຄະດີໃນສະຖານການຟອກເງິນ, ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ; ຕິດຕາມ, ກວດກາ ການແຈ້ງ ແລະ ລັກລອບການນຳເງິນສົດ, ວັດຖຸມີຄ່າ ແລະ ເຄື່ອງມືທາງດ້ານການເງິນ ໃນເວລາເຂົ້າ-ອອກ ສປປ ລາວ ແລະ ອື່ນ;

2. ຮຽກເອົາ, ສະໜອງທຸກຂໍ້ມູນ ທີ່ກ່ຽວຂ້ອງ ແລະ ຈຳເປັນ ເປັນຕົ້ນ ສະຖິຕິກ່ຽວກັບເງິນສົດ ທີ່ມີມູນຄ່າເກີນກຳນົດ, ວັດຖຸມີຄ່າ ແລະ ເຄື່ອງມືທາງດ້ານການເງິນ ໃນເວລາເຂົ້າ-ອອກ ສປປ ລາວ, ການລັກລອບນຳເຂົ້າ-ສົ່ງອອກ ສິນຄ້າ ເຄື່ອງຂອງປະເພດເກືອດຫ້າມ ແລະ ອື່ນໆ ທີ່ຕິດພັນກັບ ຕຟງ ແລະ ຕສຣ ໃຫ້ແກ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ແລະ ສຳນັກງານຂໍ້ມູນຕ້ານການຟອກເງິນ;

3. ເປັນເຈົ້າການ ໃນການຈັດຕັ້ງປະຕິບັດພັນທະ ຂອງຕົນ ທັງພາຍໃນ ແລະ ສາກົນ ທີ່ຕິດພັນກັບວຽກງານ ຕຟງ ແລະ ຕສຣ;

4. ຮຽກເອົາຂໍ້ມູນຈາກຫົວໜ່ວຍທີ່ມີໜ້າທີ່ລາຍງານ ແລະ ສຳນັກງານຂໍ້ມູນຕ້ານການຟອກເງິນ, ພ້ອມທັງສະໜອງທຸກຂໍ້ມູນ ເປັນຕົ້ນ ສະຖິຕິໃນການສືບສວນ-ສອບສວນ ການກະທຳຜິດຕົ້ນ ຫຼື ການຟອກເງິນ ແລະ ອື່ນໆ ທີ່ກ່ຽວຂ້ອງ ກັບ ຕຟງ ແລະ ຕສຣ ໃຫ້ພາກສ່ວນກ່ຽວຂ້ອງ.

**ມາດຕາ 10 ສິດ ແລະ ໜ້າທີ່ ຂອງກະຊວງກະສິກຳ ແລະ ປ່າໄມ້**

ກະຊວງກະສິກຳ ແລະ ປ່າໄມ້ ມີ ສິດ ແລະ ໜ້າທີ່ ຕາມທີ່ກຳນົດໄວ້ໃນ ຂໍ້ 1, 2, 3, 5, 11, 12, 13 ແລະ 14 ຂອງມາດຕາ 4 ຂອງດຳລັດສະບັບນີ້ ຍັງມີສິດ ແລະ ໜ້າທີ່ ດັ່ງນີ້:

1. ປະສານງານ, ດຳເນີນການສືບສວນ-ສອບສວນ ກະທຳຜິດຕົ້ນ ກ່ຽວກັບການກະທຳຜິດທາງອາຍາ ກ່ຽວກັບ ສັດນ້ຳ ສັດປ່າ ປ່າໄມ້ ຄຽງຄູ່ກັບການສືບສວນ-ສອບສວນທາງດ້ານການເງິນ ເພື່ອນຳໄປສູ່ການດຳເນີນຄະດີໃນສະຖານການຟອກເງິນ, ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

2. ເປັນເຈົ້າການ ໃນການຈັດຕັ້ງປະຕິບັດພັນທະ ຂອງຕົນ ທັງພາຍໃນ ແລະ ສາກົນ ກ່ຽວກັບ ຕຟງ ແລະ ຕສຣ;

3. ຮຽກເອົາຂໍ້ມູນຈາກຫົວໜ່ວຍທີ່ມີໜ້າທີ່ລາຍງານ ແລະ ສຳນັກງານຂໍ້ມູນຕ້ານການຟອກເງິນ, ພ້ອມທັງສະໜອງທຸກຂໍ້ມູນ ເປັນຕົ້ນ ສະຖິຕິໃນການສືບສວນ-ສອບສວນ ການກະທຳຜິດຕົ້ນ ຫຼື ການຟອກເງິນ ແລະ ອື່ນໆ ທີ່ກ່ຽວຂ້ອງກັບວຽກງານ ຕຟງ ແລະ ຕສຣ ໃຫ້ພາກສ່ວນກ່ຽວຂ້ອງ.

**ມາດຕາ 11 ສິດ ແລະ ໜ້າທີ່ ຂອງກະຊວງປ້ອງກັນປະເທດ**

ກະຊວງປ້ອງກັນປະເທດ ນອກຈາກມີ ສິດແລະ ໜ້າທີ່ ຕາມທີ່ກຳນົດໄວ້ໃນ 1, 2, 3, 5, 11, 12, 13 ແລະ 14 ຂອງມາດຕາ 4 ຂອງດຳລັດສະບັບນີ້ ຍັງມີ ສິດ ແລະ ໜ້າທີ່ ໃນການສືບສວນ-ສອບສວນ ການກະທຳ

ຜິດຕົ້ນ ກ່ຽວກັບການກະທຳຜິດທາງອາຍາທີ່ຢູ່ໃນຄວາມຮັບຜິດຊອບ ຂອງຕົນ ຄຽງຄູ່ກັບການສືບສວນ-ສອບສວນທາງດ້ານການເງິນ ເພື່ອນຳໄປສູ່ການດຳເນີນຄະດີໃນສະຖານການຟອກເງິນ, ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

**ມາດຕາ 12 ສິດ ແລະ ໜ້າທີ່ ຂອງກະຊວງປ້ອງກັນຄວາມສະຫງົບ**

ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ຄຸ້ມຄອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ເຊັ່ນ: ການພະນັນອອນລາຍ. ພ້ອມທັງຈັດຕັ້ງປະຕິບັດຄວາມຮັບຜິດຊອບ ຕາມທີ່ກຳນົດໄວ້ໃນ ມາດຕາ 4 ຂອງດຳລັດສະບັບນີ້ ຍັງມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເຈົ້າການໃນການປະສານງານ, ດຳເນີນ ການສືບສວນ-ສອບສວນ ການກະທຳຜິດຕົ້ນ ກ່ຽວກັບການກະທຳຜິດທາງອາຍາທີ່ຢູ່ໃນຄວາມຮັບຜິດຊອບ ຂອງຕົນ ຄຽງຄູ່ກັບການສືບສວນ-ສອບສວນທາງດ້ານການເງິນ ເພື່ອນຳໄປສູ່ການດຳເນີນຄະດີໃນສະຖານການຟອກເງິນ, ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

2. ຄົ້ນຄວ້າກົນໄກ ແລະ ຂັ້ນຕອນ ເພື່ອກຳນົດເປົ້າໝາຍບັນຊີລາຍການຊັບສິນ ທີ່ຕິດພັນກັບການຟອກເງິນ, ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃຫ້ແກ່ວິສາຫະກິດໄປສະນີ ແລະ ຫົວໜ່ວຍທີ່ມີໜ້າທີ່ລາຍງານ ໂດຍປະສານສົມທົບກັບພາກສ່ວນກ່ຽວຂ້ອງ;

3. ຄົ້ນຄວ້າກົນໄກ ແລະ ຂັ້ນຕອນ ໃນການກຳນົດລາຍຊື່ຜູ້ກໍ່ການຮ້າຍ ແລະ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ພາຍໃນປະເທດ ແລະ ນຳສົ່ງບັນຊີລາຍຊື່ຜູ້ກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ພາຍຫຼັງໄດ້ຮັບຈາກກະຊວງການຕ່າງປະເທດ ໃຫ້ວິສາຫະກິດໄປສະນີ;

4. ເປັນເຈົ້າການ ໃນການສ້າງ ແລະ ປັບປຸງ ນິຕິກຳກ່ຽວກັບການສືບສວນ-ສອບສວນຄະດີທີ່ມີການກະທຳຜິດຕົ້ນ ແລະ ຟອກເງິນທີ່ນອນຢູ່ໃນຂອບເຂດຄວາມຮັບຜິດຊອບ, ຈັດຕັ້ງປະຕິບັດພັນທະ ຂອງຕົນ ທັງພາຍໃນ ແລະ ສາກົນ ກ່ຽວກັບວຽກງານ ຕຟງ ແລະ ຕສຣ;

5. ຄົ້ນຄວ້າພິຈາລະນາຄວາມຄົບຖ້ວນ, ຄວາມພຽງພໍ ຂອງຂໍ້ມູນໃນບົດລາຍງານຂ່າວກອງທາງດ້ານການເງິນ, ພ້ອມທັງໃຫ້ຄຳສະເໜີ ຫຼື ຄຳແນະນຳ ທີ່ສຳນັກງານຂໍ້ມູນຕ້ານການຟອກເງິນ ສົ່ງໄປຍັງພາກສ່ວນຂອງຕົນ ເພື່ອໃຫ້ສາມາດດຳເນີນຄະດີໃນສະຖານການຟອກເງິນ ໄດ້ ແລະ ແຈ້ງຜົນການສືບສວນ-ສອບສວນ ໃຫ້ແກ່ສຳນັກງານຂໍ້ມູນຕ້ານການຟອກເງິນ ທຸກຄັ້ງ;

6. ຮຽກເອົາຂໍ້ມູນຈາກຫົວໜ່ວຍທີ່ມີໜ້າທີ່ລາຍງານ ແລະ ສຳນັກງານຂໍ້ມູນຕ້ານການຟອກເງິນ, ພ້ອມທັງ ສະໜອງທຸກຂໍ້ມູນ ເປັນຕົ້ນ ສະຖິຕິໃນການສືບສວນ-ສອບສວນ ການກະທຳຜິດຕົ້ນ ຫຼື ການຟອກເງິນ ແລະ ອື່ນໆ ທີ່ກ່ຽວຂ້ອງ ກັບ ຕຟງ ແລະ ຕສຣ ໃຫ້ພາກສ່ວນກ່ຽວຂ້ອງ.

**ມາດຕາ 13 ສິດ ແລະ ໜ້າທີ່ ຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີໜ້າທີ່ໃນການຄຸ້ມຄອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ເຊັ່ນ: ບໍລິສັດຫຼັກຊັບ, ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ແລະ ກອງທຶນເພື່ອການລົງທຶນ, ພ້ອມທັງຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ ຕາມທີ່ກຳນົດໄວ້ໃນມາດຕາ 4 ຂອງດຳລັດສະບັບນີ້ ແລະ ຍັງມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເຈົ້າການໃນການປະສານງານ, ດຳເນີນການສືບສວນ-ສອບສວນ ກະທຳຜິດຕົ້ນກ່ຽວກັບການກະທຳຜິດທາງອາຍາກ່ຽວກັບ ການຊື້ ຂາຍຂໍ້ມູນພາຍໃນ ແລະ ປັ່ນຕະຫຼາດ ຄຽງຄູ່ກັບການສືບສວນ-ສອບສວນທາງດ້ານການເງິນ ເພື່ອນຳໄປສູ່ການດຳເນີນຄະດີໃນສະຖານການຟອກເງິນ, ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

2. ເປັນເຈົ້າການ ໃນການຈັດຕັ້ງປະຕິບັດພັນທະຂອງຕົນ ທັງພາຍໃນ ແລະ ສາກົນ ກ່ຽວກັບວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

3. ຮຽກເອົາຂໍ້ມູນຈາກຫົວໜ່ວຍທີ່ມີໜ້າທີ່ລາຍງານ ແລະ ສຳນັກງານຂໍ້ມູນຕ້ານການຟອກເງິນ, ພ້ອມທັງ ສະໜອງທຸກຂໍ້ມູນ ເປັນຕົ້ນ ສະຖິຕິໃນການສືບສວນ-ສອບສວນ ການກະທຳຜິດຕົ້ນ ຫຼື ການຟອກເງິນ ແລະ ອື່ນໆ ທີ່ກ່ຽວຂ້ອງ ກັບຕຟງ ແລະ ຕສຣ ໃຫ້ພາກສ່ວນກ່ຽວຂ້ອງ.

**ມາດຕາ 14 ສິດ ແລະ ໜ້າທີ່ ຂອງກະຊວງຍຸຕິທຳ**

ກະຊວງຍຸຕິທຳ ຄຸ້ມຄອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ເຊັ່ນ: ວິສາຫະກິດກົດໝາຍ ແລະ ທະນາຍຄວາມ. ພ້ອມທັງຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ ຕາມທີ່ກຳນົດໄວ້ໃນມາດຕາ 4 ຂອງດຳລັດສະບັບນີ້. ນອກຈາກນີ້, ຍັງມີຄວາມຮັບຜິດຊອບ ດັ່ງນີ້:

1. ເປັນເຈົ້າການ ໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ກ່ຽວກັບຄະດີການກະທຳຜິດຕົ້ນ, ຄະດີຟອກເງິນ, ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

2. ເປັນເຈົ້າການ ໃນການຈັດຕັ້ງປະຕິບັດພັນທະຂອງຕົນ ທັງພາຍໃນ ແລະ ສາກົນ ກ່ຽວກັບວຽກງານ ຕຟງ ແລະ ຕສຣ.

**ມາດຕາ 15 ສິດ ແລະ ໜ້າທີ່ ຂອງອົງການປົກຄອງທ້ອງຖິ່ນ**

ອົງການປົກຄອງທ້ອງຖິ່ນ ມີສິດ ແລະ ໜ້າທີ່ ຕາມທີ່ກຳນົດໄວ້ໃນມາດຕາ 4 ຂອງດຳລັດສະບັບນີ້, ນອກຈາກນັ້ນ, ຍັງມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສະໜອງຂໍ້ມູນ, ມີຄຳເຫັນ, ປະກອບສ່ວນ, ໃຫ້ການຮ່ວມມື ແລະ ປະສານສົມທົບກັບກະຊວງ, ອົງການ ແລະ ສຕຟງ ໃນການຈັດຕັ້ງປະຕິບັດວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ;
2. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

## ໝວດທີ 3
## ບົດບັນຍັດສຸດທ້າຍ

**ມາດຕາ 16 ການຈັດຕັ້ງປະຕິບັດ**

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 17 ຜົນສັກສິດ**

**ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍ ແລະ ປ່ຽນແທນດຳລັດວ່າດ້ວຍຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 127/ນຍ, ລົງວັນທີ 20 ກຸມພາ 2020.**

**ນາຍົກລັດຖະມົນຕີ**

**ສອນໄຊ ສີພັນດອນ**